**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງວຽງຈັນ

ຄະນະໂຄສະນາອົບຮົມແຂວງ

ເລກທີ 186 / ຄອຮ.ຂຈ

ວັນທີ 28.ກໍລະກົດ 2025

# ແຈ້ງການແນະນຳ

**ເຖິງ : ຄະນະໂຄສະນາອົບຮົມບັນດາເມືອງ 11 ເມືອງ ທົ່ວແຂວງວຽງຈັນ.**

**ເລື່ອງ : - ການເຜີຍແຜ່ ແລະ ຄຸ້ມຄອງການນຳໃຊ້ຂໍ້ມູນຂ່າວສານຂອງຄະນະໂຄສະນາອົບຮົມ.**

**- ການສ່ອງແສງລາຍງານສະພາບແນວຄິດ-ທາງສຽງສັງຄົມ ຢູ່ແຕ່ລະເມືອງ.**

- ອີງຕາມ ມະຕິຕົກລົງຂອງຄະນະປະຈຳພັກແຂວງວຽງຈັນ ສະບັບເລກທີ 059/ຄປພ.ວຈ ລົງວັນທີ 01 ມີນາ 2023 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ.
- ອີງຕາມ ຄຳສັ່ງຂອງຄະນະປະຈຳພັກແຂວງ ສະບັບເລກທີ 08/ຄປພວຈ, ລົງວັນທີ 17 ສິງຫາ 2017 ວ່າດ້ວຍ ການເພີ່ມທະວີວຽກງານຕິດຕາມ, ເກັບກຳສະພາບແນວຄິດ-ທາງສຽງສັງຄົມ ໃນໄລຍະໃໝ່.
- ອີງຕາມ ແຈ້ງການແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 1231/ຄອສພ, ລົງວັນທີ 17 ທັນວາ 2024 ກ່ຽວກັບ ການລົງທະບຽນນຳໃຊ້ຂໍ້ມູນຂ່າວສານອັດຕະໂນມັດ.

ເພື່ອຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ສະມາຊິກພັກ ຄັ້ງທີ VIII ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ ໃຫ້ເຂົ້າສູ່ລວງເລິກ ແລະ ເກີດເປັນຮູບປະທຳຕົວຈິງ, ທັງເປັນການປະກອບສ່ວນໂຄສະນາປຸກລະດົມ, ສຶກສາອົບຮົມໃຫ້ສະມາຊິກພັກ, ພະນັກງານ ແລະ ປະຊາຊົນບັນດາເຜົ່າ ຮັບຮູ້, ເຊື່ອມຊຶມ, ກຳແໜ້ນຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ ວາງອອກແຕ່ລະໄລຍະ.

**ຄະນະໂຄສະນາອົບຮົມແຂວງວຽງຈັນ ອອກແຈ້ງການແນະນຳ :**

**1. ການເຜີຍແຜ່ ແລະ ຄຸ້ມຄອງການນຳໃຊ້ຂໍ້ມູນຂ່າວສານ ຂອງຄະນະໂຄສະນາອົບຮົມແຕ່ລະຂັ້ນ ຢ່າງເປັນທາງການ ມີຄືດັ່ງນີ້:**

- ຂ່າວສານຂອງຄະນະໂຄສະນາອົບຮົມສູນກາງພັກ ສາມາດເຂົ້າເບິ່ງຢູ່ເວບໄຊສ www.ptc.gov.la ແລະ ເຟດບຸກ ຄະນະໂຄສະນາອົບຮົມສູນກາງພັກ PTC
- ຂ່າວສານຂອງຄະນະໂຄສະນາອົບຮົມແຂວງວຽງຈັນ ສາມາດເຂົ້າເບິ່ງຢູ່ເວບໄຊສ www.ptvtp.gov.la ແລະ ເຟດບຸກ ຄະນະໂຄສະນາອົບຮົມແຂວງວຽງຈັນ
- ໃຫ້ຄະນະໂຄສະນາອົບຮົມແຕ່ລະເມືອງ ເອົາໃຈໃສ່ເກັບກຳຂໍ້ມູນ-ຮູບພາບ, ຂຽນຂ່າວການເຄື່ອນໄຫວວຽກງານ ແລະ ກິດຈະກຳຕ່າງໆ ໃນຂອບເຂດຄວາມຮັບຜິດຊອບ ເພື່ອປະກອບສ່ວນເຜີຍແຜ່ລົງໃນເວບໄຊສ ແລະ ເຟດບຸກ ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ ຢ່າງເປັນປົກກະຕິຕໍ່ເນື່ອງ (ໃຫ້ມີພະນັກງານຮັບຜິດຊອບວຽກດັ່ງກ່າວ 1-2 ທ່ານ).

2. ໃຫ້ຄະນະໂຄສະນາອົບຮົມແຕ່ລະເມືອງ ເອົາໃຈໃສ່ເກັບກຳ ແລະ ສະຫຼຸບລາຍງານສະພາບແນວຄິດ-ທາງສຽງສັງຄົມຂອງປະຊາຊົນ ທັງດ້ານທີ່ພົ້ນເດັ່ນ ແລະ ດ້ານຫຍໍ້ທໍ້, ບັນຫາປະກົດການຫຍໍ້ທໍ້ ແລະ ຖ້ອຍທຳນອງທີ່ບິດເບືອນຂອງສັດຕູ ທີ່ເກີດຂຶ້ນພາຍໃນເມືອງຂອງຕົນ ໃຫ້ລາຍງານເປັນປົກກະຕິທຸກໆເດືອນ.

3. ໃຫ້ສືບຕໍ່ຈັດຕັ້ງປະຕິບັດຕາມແຈ້ງການແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ **1231/ຄອສພ, ລົງວັນທີ 17 / 12 / 2024** ກ່ຽວກັບ ການລົງທະບຽນນຳໃຊ້ຂໍ້ມູນຂ່າວສານອັດຕະໂນມັດ ໃຫ້ພະນັກງານສັງກັດຢູ່ຄະນະໂຄສະນາອົບຮົມເມືອງ ທຸກທ່ານ ປະຕິບັດຄືດັ່ງນີ້:

- ຂັ້ນຕອນທີ 1: ສະແກນເຂົ້າລິ້ງຢູ່ ຄິວອາໂຄດ ດ້ານລຸ່ມແຈ້ງການນີ້ ຫຼື ສອບຖາມເອົາລິ້ງຈາກຄະນະຮັບຜິດຊອບຂັ້ນແຂວງ ເພື່ອລົງທະບຽນຂໍ້ມູນຂອງທ່ານໃຫ້ສຳເລັດ.
- ຂັ້ນຕອນທີ 2: ໃຫ້ບັນທຶກເບີໂທແອັດມິນຂອງສູນກາງ 020 5222 8648 ແລະ 020 5222 8658 ໄວ້ໃນໂທລະສັບມືຖືຂອງທ່ານ, ແລ້ວພິມຂໍ້ຄວາມສົ່ງຫາວັອດແອັບເບີຂ້າງເທິງ ແຈ້ງຮັບຂ່າວສານອັດຕະໂນມັດ.
- ຂັ້ນຕອນທີ 3: ໃຫ້ສັງລວມລາຍຊື່ພະນັກງານຄະນະໂຄສະນາອົບຮົມເມືອງ ຜູ້ທີ່ລົງທະບຽນສຳເລັດ ແລະ ຜູ້ທີ່ບໍ່ສາມາດລົງທະບຽນ (ພ້ອມ ເຫດຜົນ) ສົ່ງໃຫ້ຄະນະຮັບຜິດຊອບຂັ້ນແຂວງ ບໍ່ໃຫ້ກາຍທ້າຍເດືອນ 8 /2025.

4. ໃຫ້ກະກຽມສ້າງໂຄງຮ່າງການຈັດຕັ້ງຄະນະໂຄສະນາອົບຮົມຂອງແຕ່ລະເມືອງ ພາຍຫຼັງປັບປຸງການຈັດຕັ້ງໂຮມເອົາວຽກງານຖະແຫຼງຂ່າວ ມາສັງກັດຢູ່ ຄະນະໂຄສະນາອົບຮົມເມືອງ ສຳເລັດແລ້ວສົ່ງເປັນຟາຍເອເລັກໂຕຼນິກ ( PDF ຫຼື JPEG ) ໃຫ້ຄະນະຮັບຜິດຊອບເຜີຍແຜ່ລົງໜ້າເວບໄຊສ ຂອງຄະນະໂຄສະນາອົບຮົມແຂວງວຽງຈັນ.

ສະນັ້ນ ຈຶ່ງແຈ້ງການແນະນຳມາຍັງບັນດາທ່ານ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະ.**

ຄະນະໂຄສະນາອົບຮົມແຂວງ

ສີທົນ ແສງພະຈັນ

**ຄະນະຮັບຜິດຊອບຂັ້ນແຂວງ:**

1. ນ. ມະໄລພອນ ພວງຈັນລາ 020 5570 4612
2. ທ. ເສີດ ຢ່າຢວນ 020 9883 0280

**ສະແກນລົງທະບຽນຮັບຂ່າວສານອັດຕະໂນມັດ.**